ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ລາວເວີນ ມະຫາຊົນ
ອາຄານລາວ-ໄອເຕັກ, ຖະໜົນກຳແພງເມືອງ
ເມືອງ ໄຊເຊດຖາ, ນະຄອນຫລວງວຽງຈັນ
ໂທຣ : 021 415477, ແຟັກ: 021 415409

ເລກທີ 0578 / ລວມຊ
ວັນທີ 12 MAY 2017

ບົດສະຫລຸບຜົນການດຳເນີນທຸລະກິດ ຂອງບໍລິສັດ ລາວເວີນ ມະຫາຊົນ ແລະ ບໍລິສັດໃນເຄືອ ສຳລັບ ໄຕມາດ 01 ປີ 2017

ບໍລິສັດລາວເວີນ ມະຫາຊົນ ພ້ອມບໍລິສັດໃນເຄືອ ຂໍຖືເປັນກຽດຮຽນສະເໜີມາຍັງທ່ານ ບົດສະຫລຸບຜົນການດຳເນີນທຸລະກິດຂອງບໍລິສັດ ລາວເວີນ ມະຫາຊົນ ແລະ ບໍລິສັດໃນເຄືອ ສຳລັບໄຕມາດ 01 ປີ 2017 ພໍສັງລວມໄດ້ດັ່ງນີ້:

I ປະຫວັດຫຍໍ້ ຂອງບໍລິສັດ:

ບໍລິສັດລາວເວີນມະຫາຊົນພ້ອມບໍລິສັດໃນເຄືອ ມີຄວາມເປັນມາໂດຍຫຍໍ້ ຄືດັ່ງນີ້:

- ບໍລິສັດລາວເວີນມະຫາຊົນ ໃນໄລຍະສ້າງຕັ້ງບໍລິສັດແມ່ນໃສ່ຊື່ວ່າ ບໍລິສັດ ລາວເວີນ ຈັນຄອມເປັກສ ຈຳກັດ ຊຶ່ງໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 31 ມີນາ ປີ 2004 ແລະແຕ່ວັນທີ 12 ຕຸລາ ປີ 2011 ຈຶ່ງໄດ້ຫັນ ມາເປັນ ບໍລິສັດລາວເວີນມະຫາຊົນ ຊຶ່ງມີສາຂາໜຶ່ງສາຂາ ຕັ້ງຢູ່ ເມືອງປາກເຊ ແຂວງຈຳປາສັກ, ບໍລິສັດ ສ້າງຕັ້ງຂຶ້ນບົນພື້ນຖານສັນຍາວ່າດ້ວຍການລົງທຶນ ສ້າງຕັ້ງສູນການຄ້າ ການວາງສະແດງ ແລະ ການປະຊຸມລາວ-ສາກົນ ຢູ່ນະຄອນຫລວງວຽງຈັນ ຊຶ່ງມີອາຍຸ ສຳປະທານທີ່ດິນຈາກລັດ ເປັນໄລຍະເວລາ 90 ປີ ເລີ່ມແຕ່ ວັນທີ 24 ທັນວາ ປີ 2003 ຫາ 23 ທັນວາ ປີ 2093, ໂດຍເປັນ ໂຄງການ BOT (ກໍ່ສ້າງ ບໍລິຫານງານ ຄົບກຳນົດ ແລ້ວມອບໂອນໃຫ້ລັດ) ມີສຳນັກງານໃຫ່ຍຕັ້ງຢູ່ ອາຄານໄອເຕັກ ຖະນົນກຳແພງເມືອງ ບ້ານ ເລກທີ 123 ໜ່ວຍ 13 ບ້ານໂພນທັນເໜືອ ເມືອງໄຊ ເສດຖາ ນະຄອນຫຼວງວຽງຈັນ.
- ບໍລິສັດ ລາວເວີນ ສະຫວັນ ຈຳກັດ ໄດ້ຮັບການສ້າງຕັ້ງຂຶ້ນ ວັນທີ 3 ສິງຫາ ປີ 2009 ບົນພື້ນຖານ ສັນຍາການລົງທຶນ ແລະບໍລິຫານ ສູນການຄ້າ ການວາງສະແດງ ແລະ ການປະຊຸມ ຢູ່ແຂວງສະຫວັນ ນະເຂດ ຊຶ່ງມີອາຍຸສຳປະທານ ທີ່ດິນຈາກລັດ ເປັນໄລຍະເວລາ 90 ປີ ເລີ່ມແຕ່ວັນທີ 22 ກໍລະກົດ 2009 ຫາ 21 ກໍລະກົດ ປີ 2099 ເປັນໂຄງການ BOT (ກໍ່ສ້າງ ບໍລິຫານງານ ຄົບກຳນົດ ແລ້ວ

ມອບໂອນໃຫ້ລັດ), ໂດຍມີສຳນັກງານຕັ້ງຢູ່ອາຄານສະຫວັນໄອເຕັກ ຖະໜົນເລກທີ 09 ບ້ານໂພນ ສະຫວ່າງໃຕ້ ເມືອງ ໄກສອນ ພົມວິຫານ ແຂວງສະຫວັນນະເຂດ.

- ຕໍ່ມາໃນວັນທີ 28 ມີຖຸນາ ປີ 2013, ໄດ້ມີການຄວບລວມເອົາ ບໍລິສັດ ລາວເວີນ ມະຫາຊົນ ກັບ ບໍລິສັດ ລາວເວີນ ສະຫວັນ ຈຳກັດ ເຂົ້າມາຢູ່ໃນເຄືອດຽວກັນ, ແລະ ຈົດທະບຽນເຂົ້າເປັນ ບໍລິສັດ ລາວເວີນ ມະຫາຊົນ.

II ການລາຍງານຜົນຂອງການຂະຫຍາຍກິດຈະການແລະ ການດຳເນີນທຸລະກິດສຳລັບ ໄຕມາດ 01 ປີ 2017:

1. ຜົນຂອງການພັດທະນາກິດຈະການ ຂອງບໍລິສັດ :

ລາຍງານຄວາມຄືບໜ້າ ໃນການພັດທະນາ ກິດຈະການ ຊຶ່ງມີ ບັນດາໂຄງການທີ່ລົງທຶນ ເພີ່ມເຕີມ ແລະ ກໍ່ສ້າງໃໝ່ ລາຍລະອຽດ ຄືດັ່ງນີ້:

- ການລົງທຶນກໍ່ສ້າງ ກິດຈະການພັດທະນາຕະຫລາດທົ່ງຂັນຄຳເກົ່າໃຫ້ເປັນ ຕະຫລາດທັນສະໄໝ ທົ່ງຂັນຄຳ ເລີ້ມດຳເນີນການ ກໍ່ສ້າງອາຄານໃຫຍ່ຂອງຕະຫລາດ ແລະ ອາຄານຫ້ອງແຖວ ຮອບນອກ ໄດ້ສຳເລັດ 99% ຂອງແຜນການ, ຊຶ່ງມີມູນຄ່າການກໍ່ສ້າງທັງໝົດແມ່ນ 143,5 ຕື້ກີບ. ມາຮອດ 31 ມີນາ 2017.
- ສິ້ນສຸດ 31 ມີນາ 2017 ມີຕົວເລກຈາກການຈັບຈ່ອງສິດເຊົ່າ/ຊື້ 99 % ຂອງຫ້ອງຂາຍ ຕະຫລາດສົດຊັ້ນທີ1 ແລະ ຫ້ອງແຖວ 4ຊັ້ນ ຮອບນອກແມ່ນຈັບຈ່ອງສິດເຊົ່າ/ຊື້ 100 % ຂອງ ຈຳນວນຫ້ອງທັງໝົດ 64 ຫ້ອງ ລວມມູນຄ່າເງິນມັດຈຳທັງໝົດແມ່ນ 139,8 ຕື້ກີບ.

2. ຜົນຂອງການດຳເນີນທຸລະກິດ ແຕ່ລະກິດຈະການ :

2.1. ປະເພດທຸລະກິດ ຕົ້ນຕໍ :

ບໍລິສັດ ລາວເວີນ ມະຫາຊົນ ພ້ອມດ້ວຍບໍລິສັດໃນເຄືອ ມີການເຄື່ອນໄຫວທຸລະກິດ ຕົ້ນຕໍແມ່ນການ ບໍລິການ ແລະ ການຄ້າ ຊຶ່ງປະກອບມີ ກິດຈະການ :

- ການຂາຍສິດນຳໃຊ້ມີກຳນົດ ແລະການໃຫ້ເຊົ່າຕຶກໄອເຕັກມໍ ມີສະເພາະຢູ່ນະຄອນຫລວງວຽງຈັນ
- ການຈັດງານວາງສະແດງສິນຄ້າ ແລະຂາຍສິນຄ້າ,
- ການຈັດການປະຊຸມ ແລະສຳມະນາ ທັງພາຍໃນ ແລະສາກົນ, ພ້ອມທັງຈັດງານລ້ຽງ, ງານດອງ
- ການບໍລິການດ້ານການບັນເທີງ ມີໂຮງສາຍຮູບເງົາ, ກິລາເດີນເຕະບານ, ສວນນ້ຳ, ສວນສັດ.

2.2. ຜົນຂອງການເຄື່ອນໄຫວທຸລະກິດ :

ກິດຈະການຂ້າງເທິງນັ້ນ ໄດ້ມີການເຄື່ອນໄຫວຕາມແຜນການ ແລະ ພາລະໜ້າທີ ຂອງຕົນ ຮອດ 31 ມີນາ 2017 ພໍສະຫລຸບບາງຕົວເລກທີ່ສຳຄັນ ຄື :

2.2.1 ດ້ານການຈັດງານວາງສະແດງ ແລະຂາຍສິນຄ້າ :

ວຽກງານຈັດງານວາງສະແດງ ແລະຂາຍສິນຄ້າ ໄດ້ດຳເນີນການໄປ ຢ່າງເຂັ້ມຂຸ້ນຕາມເປົ້າໝາຍທີ່ ວາງໄວ້ ດ້ານຂໍ້ມູນຕົວເລກຂອງການເຄື່ອນໄຫວ ຂອງກິດຈະການນີ້ ຂອງພວກເຮົາພໍສະຫລຸບໄດ້ຄື :

ງານການວາງສະແດງ ແລະຂາຍສິນຄ້າ :

	ຢູ່ ນະຄອນຫລວງ	ຢູ່ ປາກເຊ	ຢູ່ ສະຫວັນນະເຂດ
ລາຍຮັບ (ກີບ)			
ໄຕມາດ 01 ປີ 2017 :	3.244.986.950	399.603.242	466.530.746
ໄຕມາດ 01 ປີ 2016 :	2.706.186.128	276.883.200	1.879.818.410
ສົມທຽບ	119,91%	144,32%	24,82%

2.2.2 ດ້ານວຽກງານການຈັດລ້ຽງ ແລະຈັດງານປະຊຸມ :

ການບໍລິການຈັດງານປະຊຸມສຳມະນາ, ງານລ້ຽງ ແລະງານດອງມີການຈັບຈອງໃນປີ 2016 ຫລຸດລົງ ທັ້ງນີ້ກໍ່ຍ້ອນວ່າມີຄູ່ແຂ່ງເຂດອ້ອມຂ້າງກໍ່ເກີດຂຶ້ນມາຫລາຍເຮັດໃຫ້ລູກຄ້າມີທາງເລືອກຫລາຍຂຶ້ນດັ່ງນັ້ນ ຈຶ່ງເຫັນໄດ້ເຖິງຈຳນວນ ແລະມູນຄ່າລາຍຮັບມີສ່ວນຫລຸດລົງ, ການເຄື່ອນໄຫວ ທຸລະກິດໃນວຽກ ງານນີ້ ພໍສະຫລຸບໄດ້ຄື :

ດ້ານວຽກງານການຈັດງານລ້ຽງ ແລະງານປະຊຸມ :

	ຢູ່ ນະຄອນຫລວງ	ຢູ່ ປາກເຊ	ຢູ່ ສະຫວັນນະເຂດ
ລາຍຮັບ (ກີບ)			
ໄຕມາດ 01 ປີ 2017:	4.180.941.820	ບໍ່ມີ	141.669.188
ໄຕມາດ 01 ປີ 2016:	3.229.796.144	ບໍ່ມີ	3.229.796.144
ສົມທຽບ	129,45%	-	12,29%

2.2.3 ການບໍລິການດ້ານຮ້ານຊັບພະສິນຄ້າ :

ການບໍລິການຂອງຮ້ານຊັບພະສິນຄ້າ ໄດ້ມີການເປີດບໍລິການ ຢູ່ທັງ 3 ບ່ອນ ຊຶ່ງສະຫລຸບ ດ້ານຕົວ ເລກລາຍຮັບໄດ້ ຄື :

	ຢູ່ ນະຄອນຫລວງ	ຢູ່ ປາກເຊ	ຢູ່ ສະຫວັນນະເຂດ
ລາຍຮັບ (ກີບ)			
ໄຕມາດ 01 ປີ 2017:	-	-	844.018.182
ໄຕມາດ 01 ປີ 2016:	-	393.745.001	1.148.762.730
ສົມທຽບ	00,00%	00,00%	73.47%

2.2.4 ภาบบໍລິภาบ ຂายห้อๆไอเต้ภม, สอบน้ำ, ธาดธ่อภ.

	ไอเต้ภม	สอบน้ำ	ธ้าบ อาหาบ
ลายธับ (ภีบ)			
ไตมาด 01 ปี 2017:	6.718.366.301	929.676.363	918.939.524
ไตมาด 01 ปี 2016:	6.350.137.970	1.157.043.592	1.656.732.117
สิมทูบ	105,80%	80,03%	55,87%

2.2.5 ภาบบໍລິภาบบับเฮิๆ และอื่บๆ

ด้าบภาบบับเฮิๆ บໍลิสัด ได้มีภาบจัดภาบบໍลิภาบ แต่มีบางบ่อบ เป้บต้บแม่บยู่บะถอบหลวๆ อ๋งจับ (สะเพาะโธๆสายธูบเฮๆเก่า) พໍสะหลุบด้าบต๊อเลภาลายธับ ได้ถื :

- ด้าบภาบบໍลิภาบบับเฮิๆ:

	ยู่ บะถอบหลวๆ	ยู่ ปากเซ	ยู่ สะหวับบะเซด
ลายธับ (ภีบ)			
ไตมาด 01 ปี 2017:	197.472.182	บ่มี	บ่มี
ไตมาด 01 ปี 2016:	48.118.641	บ่มี	บ่มี
สิมทูบ	410.39%		

- ด้าบอื่บๆ :

	ยู่ บะถอบหลวๆ	ยู่ ปากเซ	ยู่ สะหวับบะเซด
ลายธับ (ภีบ)			
ไตมาด 01 ปี 2017:	52.604.546	บ่มี	1.669.091
ไตมาด 01 ปี 2016:	7.050.807.837	736.862	75.612.382
สิมทูบ	00,75%	00,00%	02,21%

III ບົດສະຫລຸບ ແລະ ການປະເມີນຜົນການດຳເນີນທຸລະກິດ ຂອງບໍລິສັດ ລາວເວີນມະຫາຊົນ ແລະ ບໍລິສັດໃນເຄືອ ສຳລັບໄຕມາດ 01 2017:

ບົນພື້ນຖານການເຄື່ອນໄຫວ ທຸລະກິດ ໃນກິດຈະການຕົ້ນຕໍ ຂອງບໍລິສັດລາວ ເວີນ ມະຫາ ຊົນ ແລະ ບໍລິສັດໃນເຄືອ ຈົນຮອດວັນທີ 31 ມີນາ 2017 ພວກເຮົາຂໍສະຫລຸບ ດ້ານຕົວເລກຕົ້ນຕໍ ທາງດ້ານການເງິນ ທີ່ມີຄວາມສຳຄັນໃນການຮັບຮູ້ ໂດຍການສົມທຽບກັບໄລຍະປີຜ່ານມາ ຊຶ່ງມີຂໍ້ມູນທັງໝົດ ພໍໄດ້ສະຫລຸບສັງລວມ ໄດ້ຄື :

1. ສະຫລຸບດ້ານຮັບລວມ :

ການສະຫລຸບ ດ້ານການເງິນ ສຳລັບໄຕມາດ 01 ປີ 2017 :

+ ມູນຄ່າການຂາຍ ແລະບໍລິການ

- ສຳລັບທຸລະກິດຕົ້ນຕໍ ທັງໝົດ ຂອງສຳລັບໄຕມາດ 01 ປີ 2017 ແມ່ນ 18.094.006.316 ເທົ່າກັບ 90,14% ທຽບໃສ່ລາຍຮັບຂອງໄຕມາດ 01 ປີ 2016.
- ລວມມູນຄ່າຊັບສິນສຳລັບໄຕມາດ 01 ປີ 2017 : 765.594.378.232 ກີບ ເທົ່າກັບ 102,71% ຈາກປີ 2016.
- ກຳໄລຫລັງຫັກອາກອນສຳລັບໄຕມາດ 01 ປີ 2017 : 964.538.405 ກີບ ແມ່ນຫລຸດລົງ ເທົ່າກັບ 20,37% ຂອງກຳໄລ ໄຕມາດ01 ປີ 2016.

2. ບົດສະຫລຸບການເງິນສຳລັບໄຕມາດ 01 ປີ 2017 (ສິ້ນສຸດວັນທີ 31 ມີນາ 2017) ຂອງ ບໍລິສັດລາວເວີນ ມະຫາຊົນ ແລະ ບໍລິສັດໃນເຄືອມີດັ່ງນີ້:

➢ ໃບສະຫລຸບຊັບສົມບັດ-ຊັບສິນ

	ບົດ ອະທິບາຍ	31 ມີນາ 2017 ກີບ	31 ທັນວາ 2016 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ		3.634.438.774	3.790.473.943
ໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ		25.242.802.824	13.462.699.724
ເຄື່ອງໃນສາງ, ສຸດທິ		6.215.657.318	4.804.212.079
ຊັບສິນໝຸນວຽນອື່ນໆ		2.922.135.157	2.790.813.684
ລວມຊັບສິນໝຸນວຽນ		**38.015.034.073**	**24.848.199.430**
ຊັບສິນບໍ່ໝຸນວຽນ			
ຊັບສິນຄົງທີ່ ມີຕົວຕົນ, ສຸດທິ	5	638.069.743.015	3.790.473.943
ຊັບສິນຄົງທີ່ ບໍ່ມີຕົວຕົນ, ສຸດທິ	6	605.271.473	639.788.643
ຊັບສິນບໍ່ໝຸນວຽນອື່ນໆ		88.919.363.744	93.161.032.927
ລວມຊັບສິນບໍ່ໝຸນວຽນ		**272.594.378.232**	**720.529.112.137**
ລວມຊັບສິນ		**765.609.412.305**	**745.377.311.567**

➢ ໃบສະຫລຸບຊັບສົມບັດ-ໜີ້ສິນ

	ບົດ ອະທິບາຍ	31 ມີນາ 2017 ກີບ	31 ມີນາ 2016 ກີບ
ໜີ້ສິນ ແລະ ທຶນຕົນເອງຂອງຜູ້ຖືຮຸ້ນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງຈາກລູກຄ້າ ແລະ ໜີ້ຕ້ອງ ສົ່ງອື່ນໆ	7	137.248.035.265	126.506.646.277
ເງິນກູ້ຢືມ		48.988.157.828	48.269.161.525
ລາຍຮັບລ່ວງໜ້າ- ໝຸນວຽນ		3.304.817.014	3.333.831.782
ໜີ້ສິນໝຸນວຽນອື່ນໆ		148.057.071.328	140.500.288.115
ລວມໜີ້ສິນໝຸນວຽນ		337.598.081.435	318.969.927.699
ໜີ້ສິນບໍ່ໝຸນວຽນ			
ລາຍຮັບລ່ວງໜ້າ- ບໍ່ໝຸນວຽນ		251.503.649.801	252.304.557.345
ລວມໜີ້ສິນບໍ່ໝຸນວຽນ		**251.503.649.801**	**252.304.557.345**
ລວມໜີ້ສິນ		**589.101.731.236)**	**571.274.485.044**
ທຶນຜູ້ຖືຮຸ້ນ			
ທຶນຈົດທະບຽນ			
ຮຸ້ນສາມັນ		79.121.818.000	79.121.818.000
ທຶນຈົດທະບຽນຮຸ້ນສາມັນ - ຖອກແລ້ວ		79.121.818.000	79.121.818.000
ສ່ວນເພີ່ມມູນຄ່າຮຸ້ນ		33.581.993.681	33.581.993.681
ສ່ວນຜິດຜ່ຽງຈາກການລວມທຸລະກິດພາຍ ໃຕ້ການຄວບຄຸມທົ່ວໄປຄືກັນ		(12.996.191.989)	(12.996.191.989)
ສ່ວນຜິດຜ່ຽງຈາກການແປງຄ່າເອກະສານ ລາຍງານການເງິນ		0	214.907.844
ກຳໄລສະສົມ			
ຄັງສະສົມຕາມລະບຽບການ		12.733.617.908	12.733.617.908
ກຳໄລສະສົມຍັງບໍ່ທັນແບ່ງປັນ		64.066.443.469	61.446.681.079
ລວມທຶນຕົນເອງຂອງຜູ້ຖືຮຸ້ນ		**176.507.681.069**	**174.102.826.523**
ລວມໜີ້ສິນ ແລະ ທຶນຕົນເອງຂອງຜູ້ຖືຮຸ້ນ		**765.609.412.305**	**745.377.311.567**

➢ ໃບລາຍງານຜົນໄດ້ຮັບ ສຳລັບໄຕມາດ 01 ປີ 2017.

	ບົດ ອະທິບາຍ	31 ມີນາ 2017 ກີບ	31 ມີນາ 2016 ກີບ
ລາຍຮັບຈາກການຂາຍ ແລະການບໍລິການ		18.094.006.316	20.073.676.374
ຕົ້ນທຶນໃນການຂາຍ ແລະ ບໍລິການ		(11.496.230.323)	(11.869.125.939)
ກຳໄລລວມ		**6.597.775.993**	**8.204.550.435**
ລາຍຈ່າຍ ບໍລິຫານ		(4.958.772.571)	(9.671.533.650)
ລາຍຮັບອື່ນໆ		2.471.819	7.053.248.894
ກຳໄລ (ຂາດທຶນ) ຂາດທຶນຈາກອັດຕາ ແລກປ່ຽນ,ສຸດທິ		(69.467.858)	(125.351.788)
ກຳໄລຈາກການດຳເນີນງານ		**1.572.007.382**	**5.460.913.891**
ດອກເບ້ຍລາຍຮັບ		0	288.807
ລາຍຈ່າຍດອກເບ້ຍ		(251.768.821)	(217.537.050)
ກຳໄລ ກ່ອນເສຍອາກອນ		**(1.320.238.562)**	**5.243.665.648**
ອາກອນກຳໄລ		355.700.156	(508.014.875)
ກຳໄລສຸດທິສຳລັບປີ		**964.538.405**	**4.735.650.773**
ກຳໄລຕໍ່ຮຸ້ນ	10	24	120

IV ສົມທຽບຜົນການດຳເນີດທຸລະກິດສຳລັບໄຕມາດ 01 ປີ 2017 ໃສ່ແຜນປີ 2017

ເນື້ອໃນລາຍການ	ກ່ອນທົບທວນຄືນ ໄຕມາດ 01 ປີ 2017	ແຜນການເງິນ 2017	ເປີເຊັນ
ຊັບສິນ			
ຊັບສິນໝຸນວຽນ	38.015.034.073	22.800.000.000	166,73%
ຊັບສິນບໍ່ໝຸນວຽນ	272.594.378.232	730.000.000.000	99,67%
ລວມຊັບສິນທັ້ງໝົດ	**765.609.412.305**	**752.800.000.000**	**101,70%**
ໜີ້ສິນໝຸນວຽນ	337.598.081.435	190.311.641.073	177,39%
ໜີ້ສິນບໍ່ໝຸນວຽນ	251.503.649.801	372.304.557.345	67,55%
ລວມໜີ້ສິນ	**589.101.731.236**	**562.616.198.418**	**104,71%**
ທຶນຂອງຜູ້ຖືຮຸ້ນ			
ທຶນຈົດທະບຽນຖອນແລ້ວ	79.121.818.000	79.121.818.000	100,00%
ສ່ວນເພີ້ມຂອງທຶນ	33.581.993.681	33.581.993.681	100,00%
ຄັງສະສົມ ຕາມລະບຽບການ	12.733.617.908	12.641.715.414	100,73%
ກຳໄລສະສົມ ແລະ ສ່ວນຜິດຕ່ຽງຈາກການຄວບຄຸມ	50.105.713.075	47.838.274.487	104,74%
ກຳໄລໃນປີ	964.538.405	17.000.000.000	5,67%
ລວມທຶນ ແລະ ຜູ້ຖືຮຸ້ນ	**176.507.681.069**	**190.183.801.582**	**92,81%**
ລວມໜີ້ສິນ ແລະ ທຶນຕົ້ນເອງຂອງຜູ້ຖືຮຸ້ນ	**765.609.412.305**	**752.800.000.000**	**101,70%**
ລາຍຮັບ			
ຈາກການຂາຍ ແລະ ບໍລິການ	18.094.006.316	100.000.000.000	18,09%
ລວມລາຍຮັບ	**18.094.006.316**	100.000.000.000	**18,09%**
ຕົ້ນທຶນໃນການຂາຍແລະບໍລິການ	(11.496.230.323)	(51.000.000.000)	22,32%
ລາຍຈ່າຍບໍລິຫານ ແລະ ອື່ນໆ	(5.277.537.432)	(30.000.000.000)	17,59%
ລວມຕົ້ນທຶນ ແລະ ຄ່າບໍລິຫານ	**16.773.767.755**	**81.500.000.000**	**20,58%**
ກຳໄລລວມ	1.320.238.562	18.500.000.000	**7,14%**
ອາກອນກຳໄລ	(355.700.156)	(1.500.000.000)	23,71%
ກຳໄລຫລັງຫັກອາກອນ	**964.538.406**	**17.000.000.000**	**5,67%**

V ຕີລາຄາ ຜົນການເຄື່ອນໄຫວດຳເນີນທຸລະກິດ ສຳລັບໄຕມາດ 01 ປີ 2017 ຂອງບໍລິສັດ ລາວເວີ້ນ ມະຫາຊົນ ແລະ ບໍລິສັດໃນເຄືອ.

ຜ່ານດຳເນີນງານໃນທຸກໆດ້ານ ຂອງບໍລິສັດລາວເວີ້ນ ມະຫາຊົນ ພ້ອມບໍລິສັດໃນເຄືອ ສາ ມາດຕີລາຄາ ແລະ ປະເມີນຕົນເອງ ແລະ ຖອດຖອນ ໄດ້ບາງຢ່າງທີ່ຕ້ອງໄດ້ດຳເນີນການແກ້ໄຂ ແລະປັບປຸງ ໃຫ້ມີຜົນງານ ດີຂຶ້ນກວ່າເກົ່າໃນໄຕມາດ 01 ປີ 2017 ນີ້, ການຕີລາຄາໃນລາຍລະອຽດຄື :

ຕາມການປະເມີນພາບລວມ ຂອງສ່ວນລາຍຮັບທຸລະກິດແລ້ວ ການເຄື່ອນໄຫວດຳເນີນງານຂອງບໍລິ ສັດ ລາວເວີ້ນ ມະຫາຊົນ ແລະບໍລິສັດໃນເຄືອ ສຳລັບໄຕມາດ 01 ສິ້ນສຸດວັນທີ 31 ມີນາ 2017 ນັ້ນ ເຫັນວ່າ ລາຍໄດ້ ແມ່ນຕ່ຳກ່ວາ ໄຕມາດ 01 ປີ 2016 ຍ້ອນຍັງມີຜົນກະທົບຈາກການເຄື່ອນໄຫວທຸລະກິດ ເຮັດໃຫ້ກຳໄລຈາກການເຄື່ອນໄຫວທຸລະກິດໃນໄຕມາດ 01 ປີ 2017 ຕ່ຳກ່ວາ ໄຕມາດ 01 ປີ 2016 ຫລາຍ ພໍສົມຄວນ ໂດຍສະເພາະການຂາດທຶນຂອງສະຫວັນ. ນອກນີ້ຍັງມີຜົນກະທົບຈາກສະພາບອ້ອມຂ້າງໂດຍ ສະເພາະຄູ່ແຂ່ງກໍ່ເພີ່ມຂຶ້ນຫລາຍເຮັດໃຫ້ສ່ວນແບ່ງທາງດ້ານລາຍຮັບຫລຸດລົງ ແຕ່ເຖິງຈະມີກຳໄລຕ່ຳກວ່າໄຕ ມາດ 01 ປີ 2016 ຜ່ານມາກໍ່ຕາມ ແຕ່ເມື່ອການຂາຍເນື້ອທີ່ ຂອງອາຄານໃໝ່ ຕະຫລາດທົ່ງຂັນຄຳທີ່ຈະເປີດ ໃຫ້ບໍລິການໃນໄວໆນີ້ ເຊັ່ນ: ການໃຫ້ເຊົ່າພື້ນທີ່, ການຂາຍສິດເຊົ່າ/ຊື້ ແລະ ຂາຍຫ້ອງແຖວຮອບນອກນັ້ນ, ຄະນະບໍລິຫານບໍລິສັດພວກເຮົາ ຍັງຄິດວ່າ ສາມາດປະຕິບັດໄດ້ຕາມແຜນການປີ 2017 ມີເປີເຊັນສູງ ຢ່າງ ແນ່ນອນ.

ທັງໝົດນີ້ ແມ່ນການສະຫລຸບສັງລວມຜົນຂອງການດຳເນີນທຸລະກິດສຳລັບໄຕມາດ 01 ປີ 2017 ແລະ ຄາດຄະເນແຜນການ ປີ 2017 ພ້ອມທັງການສະເໜີບາງບັນຫາ ທີ່ຕ້ອງໄດ້ເອົາໃຈໃສ່ ລາຍງານຕໍ່ ສະພາຜູ້ອຳນວຍການ ເພື່ອຮຽນໃຫ້ຊາບ ແລະ ເພື່ອການຮັບຮອງເອົາ.

ຜູ້ອຳນວຍການ

ວິສັນ ນະລົງສັກ

Visanh NALONGSAK